**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 43 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 / 06 / 22

# ມະຕິ

## ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX
## ວ່າດ້ວຍການເລືອກຕັ້ງ ປະທານອົງການກວດສອບແຫ່ງລັດ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015, ໝວດທີ V, ມາດຕາ 53 ຂໍ້ 9;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 12 ຂໍ້ 3.2.4;
- ອີງຕາມ ການສະເໜີຂອງປະທານປະເທດ ສະບັບເລກທີ 059/ປປທ, ລົງວັນທີ 17 ມິຖຸນາ 2022.

ຜ່ານການຄົ້ນຄວ້າພິຈາລະນາ, ປະກອບຄຳຄິດຄຳເຫັນຢ່າງເລິກເຊິ່ງຖີ່ຖ້ວນ ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ຕໍ່ຄຳສະເໜີຂອງປະທານປະເທດ ກ່ຽວກັບການຍົກຍ້າຍ ແລະ ເລືອກຕັ້ງປະທານອົງການກວດສອບແຫ່ງລັດ ຢູ່ໃນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃນວາລະ ຕອນເຊົ້າວັນທີ 20 ມິຖຸນາ 2022.

## ກອງປະຊຸມ ຕົກລົງ:

**ມາດຕາ 1** ເລືອກຕັ້ງເອົາ **ທ່ານ ວຽງທະວີສອນ ເທບພະຈັນ**, ກຳມະການສຳຮອງສູນກາງພັກ ເປັນປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງປະທານປະເທດ.

**ມາດຕາ 2** ບັນດາອົງການຈັດຕັ້ງ ພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ, ທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປະທານສະພາແຫ່ງຊາດ ★ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປອ ໄຊສົມພອນ ພົມວິຫານ